ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄຄຊ ປັບປຸງການຈັດຕັ້ງ ແລະ ນິຕິກຳລຸ່ມກົດໝາຍ




ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ II ປະຈຳປີ 2019 ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມໃນວັນທີ 13 ມິຖຸນາ 2019 ທີ່ນະຄອນຫຼວງວຽງຈັນພາຍໃຕ້ການເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ; ພ້ອມນີ້, ຍັງມີທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງປະທານ ຄຄຊ ແລະ ບັນດາຄະນະກຳມະການຄຸ້ມຄອງຫຼັກຊັບເຂົ້າຮ່ວມຊຶ່ງກອງປະຊຸມເທື່ອນີ້ເປັນຄັ້ງທຳອິດພາຍຫຼັງທີ່ ຄຄຊ ໄດ້ມີການປັບປຸງຄະນະກຳມະການ ຄຄຊ ຊຸດໃໝ່ຕາມການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານຊຸດໃໝ່ໂດຍມີທ່ານ ນາງ ຄຳຈັນ ວົງແສນບູນ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີກະຊວງການເງິນເປັນຄະນະກຳມະການຄຸ້ມຄອງຫຼັກຊັບຄົນໃໝ່.

ກອງປະຊຸມຄັ້ງນີ້ ເປີດຂຶ້ນທ່າມກາງບັນຍາກາດທີ່ທົ່ວທັງຊາດພວມອ່ວາຍໜ້າຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII ແລະ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບຄຳສັ່ງເລກທີ 12/ນຍ ກ່ຽວກັບ 8 ມາດຕະການກະຕຸ້ນເສດຖະກິດໃຫ້ປະກົດຜົນເປັນຈິງເພື່ອແກ້ໄຂບັນດາຂໍ້ຫຍຸ້ງຍາກດ້ານຕ່າງໆ ແລະ ຂັບເຄື່ອນເສດຖະກິດຂອງ ສປປ ລາວ ໃຫ້ມີຄວາມຄ່ອງຕົວ ແລະ ສຳລັບ ຄຄຊ ພາຍຫຼັງທີ່ຜົນສຳເລັດກອງປະຊຸມ ຄຄຊ ຄັ້ງທີ I ປະຈຳປີ 2019 ທີ່ຜ່ານມາ ໄດ້ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າໃນນັ້ນຜົນສຳເລັດອັນພົ້ນເດັ່ນໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍ ແລະ ສຳເລັດການຄົ້ນຄວ້າອະນຸຍາດໃຫ້ 1 ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ. ແຕ່ຢ່າງໃດກໍ່ຕາມຍັງຕ້ອງໄດ້ສືບຕໍ່ເອົາໃຈໃສ່ພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ.

ກອງປະຊຸມ; ຍັງໄດ້ມີການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ I ປີ 2019; ຮັບຮອງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 2 ສະບັບໃນນີ້ມີລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ) ແລະ ລະບຽບວ່າດ້ວຍການຮັບຮອງທະນາຄານດູແລຊັບສິນ (ສະບັບປັບປຸງ); ໃນຂະນະດຽວກັນນີ້, ຍັງໄດ້ຮັບຮອງເອົາການສະເໜີຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດຂອງບໍລິສັດເປົ້າໝາຍ 1 ແຫ່ງ; ຮັບຮອງເອົາການສະເໜີຂາຍຮຸ້ນເພີ່ມຕື່ມຂອງບໍລິສັດຈົດທະບຽນ 1 ແຫ່ງ ແລະ ການລາຍງານສະພາບການເຄື່ອນໄຫວວຽກງານຂອງຕະຫຼາດຫຼັກຊັບລາວ.



ທ່ານຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໄດ້ຊີ້ນຳໃຫ້ຜູ້ແທນກອງປະຊຸມຈົ່ງພ້ອມກັນສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ໜັກແໜ້ນເຂັ້ມແຂງກວ່າເກົ່າ ແລະ ມອບໃຫ້ທ່ານຜູ້ວ່າການ, ຮອງປະທານ ຄຄຊ ຜູ້ປະຈຳການ ແລະ ສຳນັກງານ ຄຄຊ ຊຶ່ງເປັນກົງຈັກຊ່ວຍວຽກຂອງ ຄຄຊ ໃນການພັດທະນາຕະຫຼາດທຶນ ຈົ່ງຮີບຮ້ອນປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ ເປັນໜ້າວຽກລະອຽດ ແລະ ຈັດຕັ້ງເຊື່ອມຊຶມໃຫ້ເປັນເອກະພາບກັນ, ພ້ອມທັງຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈກອງປະຊຸມໃຫ້ເປັນຮູບປະທຳດ້ວຍຈິດໃຈເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**